# ປະກາດຮັບບົດສະເໜີໂຄງການ
# ປະຈຳປີ 2023

ກອງທຶນປົກປັກຮັກສາສິ່ງແວດລ້ອມ ເປີດຮັບບົດສະເໜີໂຄງການ ປະຈຳປີ 2023 ສຳລັບໂຄງການຂະໜາດນ້ອຍແລະຂະໜາດກາງ. ເງື່ອນໄຂໃນການສະໝັກ ແລະ ຂົງເຂດບູລິມະສິດ ມີດັ່ງນີ້:

## 1. ສະພາບລວມ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ແມ່ນເປັນກອງທຶນຂອງລັດ ທີ່ສ້າງຂຶ້ນ ເພື່ອລະດົມທຶນ ແລະ ຂົນຂວາຍທຶນຈາກພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການຕ່າງໆ ແນໃສ່ສະສົມທຶນ ເພື່ອຕອບສະໜອງ ໃຫ້ແກ່ພາກສ່ວນສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິພາບ ແລະ ໄປຕາມທິດສີຂຽວ ແລະ ຍືນຍົງ.

## 2. ຂົງເຂດການສະໜອງທຶນ

ຂົງເຂດ ຫຼື ກິດຈະກຳບູລິມະສິດ ທີ່ ກປສ ໃຫ້ການສະໜອງທຶນ ມີດັ່ງນີ້:

1) ການຈັດຕັ້ງປະຕິບັດບັນດານະໂຍບາຍ, ການບັງຄັບໃຊ້ກົດໝາຍ ແລະ ລະບຽບການ ກ່ຽວຂ້ອງກັບ ການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ, ການປົກປັກຮັກສາປ່າໄມ້, ຊີວະນາໆພັນ, ການສະກັດກັ້ນການລ່າ ແລະ ຄ້າຂາຍ ສັດນ້ຳ-ສັດປ່າປະເພດຫວງຫ້າມ, ການຄຸ້ມຄອງຊັບພະຍາກອນນ້ຳ, ການນຳໃຊ້ທີ່ດິນແບບຍືນຍົງ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ;
2) ການສ້າງຄວາມເຂັ້ມແຂງດ້ານການອະນຸລັກຊີວະນາໆພັນ, ການຄຸ້ມຄອງປ່າສະຫງວນ ແລະ ການສົ່ງເສີມຊີວິດການເປັນຢູ່ຂອງຊຸມຊົນ ເພື່ອປະກອບສ່ວນໃນການປົກປັກຮັກສາປ່າໄມ້;
3) ການແກ້ໄຂບັນຫາສິ່ງແວດລ້ອມ ໂດຍສະເພາະ ການຄວບຄຸມມົນລະພິດ (ມົນລະພິດທາງນ້ຳ ແລະ ອາກາດ) ແລະ ການຄຸ້ມຄອງສິ່ງເສດເຫຼືອ;
4) ການຈັດຕັ້ງປະຕິບັດການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ;
5) ການຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນແບບຍືນຍົງ;
6) ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ.

## 3. ພາກສ່ວນທີ່ມີເງື່ອນໄຂສະໝັກ

ພາກສ່ວນ ທີ່ມີເງື່ອນໄຂສະເໜີຂໍທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ມີດັ່ງນີ້:

- ອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ປະກອບມີ ກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນທີ່ກ່ຽວຂ້ອງ;
- ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນບໍ່ຫວັງຜົນກຳໄລ ແລະ ສະມາຄົມຕ່າງໆ ທີ່ຂຶ້ນທະບຽນໃນ ສປປ ລາວ.

## 4. ຂະໜາດຂອງໂຄງການ

ພາກສ່ວນທີ່ສົນໃຈສະໝັກທຶນສາມາດເລືອກຂຽນບົດສະເໜີໂຄງການ ສອດຄ່ອງກັບໜ້າວຽກທີ່ຈັດຕັ້ງປະຕິບັດ ແລະ ຂະໜາດໂຄງການດັ່ງນີ້:

- ສຳລັບໂຄງການຂະໜາດນ້ອຍມີມູນຄ່າຈັດຕັ້ງປະຕິບັດ ບໍ່ເກີນ 300,000,000 ກີບ (ສາມຮ້ອຍລ້ານກີບ) ແລະ ມີໄລຍະໃນການຈັດຕັ້ງປະຕິບັດໂຄງການບໍ່ເກີນ 2 ປີ ນັບຕັ້ງແຕ່ມື້ລົງລາຍເຊັນໃນການລິເລີ່ມໂຄງການ.
- ສຳລັບໂຄງການຂະໜາດກາງ ມີມູນຄ່າຈັດຕັ້ງປະຕິບັດບໍ່ເກີນ 800,000,000 ກີບ (ແປດຮ້ອຍລ້ານກີບ) ແລະ ມີໄລຍະໃນການຈັດຕັ້ງປະຕິບັດໂຄງການບໍ່ເກີນ 4 ປີ ນັບຕັ້ງແຕ່ມື້ລົງລາຍເຊັນໃນການລິເລີ່ມໂຄງການ.

**5. ຂະບວນການທົບທວນບົດສະເໜີໂຄງການ**

ເບື້ອງຕົ້ນຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງບົດສະເໜີໂຄງການ ຕາມມາດຖານ ແລະ ເງື່ອນໄຂທີ່ກຳນົດໄວ້. ຫຼັງຈາກນັ້ນ, ບົດສະເໜີໂຄງການທີ່ຜ່ານມາດຖານເງື່ອນໄຂຈະຖືກປະເມີນອີກຄັ້ງ ໃນກອງປະຊຸມຄະນະວິຊາການ ກປສ ປະຈຳໄຕມາດ, ຖ້າຫາກໄດ້ຮັບການເຫັນດີຈາກກອງປະຊຸມແລ້ວ ຈະໄດ້ນຳສະເໜີຜ່ານກອງປະຊຸມ ສະພາບໍລິຫານ ກປສ ປີລະ 2 ຄັ້ງ ເພື່ອພິຈາລະນາຮັບຮອງ.

**6. ການສະໝັກ**

6.1. ສຳລັບອົງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງສະເໜີຂໍຄຳເຫັນຈາກ ກົມວິຊາການທີ່ມີພາລະບົດບາດກ່ຽວຂ້ອງກັບຂະແໜງການນັ້ນ (ຕົວຢ່າງ: ໂຄງການກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ຊີວະນາໆພັນ ຕ້ອງສະເໜີຂໍຄຳເຫັນຈາກ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ໂຄງການກ່ຽວກັບ ວຽກງານທີ່ດິນ ຕ້ອງສະເໜີຂໍຄຳເຫັນຈາກ ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ເພື່ອກວດກາຄວາມສອດຄ່ອງກັບແຜນບູລິມະສິດຂອງພາກສ່ວນດັ່ງກ່າວ ແລະ ບໍ່ເປັນໂຄງການຊໍ້າຊ້ອນ. ຖ້າໄດ້ຮັບການເຫັນດີ ຈາກກົມວິຊາການ ຈຶ່ງສະເໜີໂຄງການເປັນທາງການຜ່ານກົມແຜນການ ຫຼື ພາກສ່ວນຮັບຜິດຊອບວຽກງານແຜນການຂອງຂະແໜງການຕົນ ສົ່ງໃຫ້ ກປສ;

6.2. ບົດສະເໜີໂຄງການຂອງ ອົງການຈັດຕັ້ງສັງຄົມ ທີ່ຕິດພັນກັບວຽກງານຂອງຂະແໜງການກ່ຽວຂ້ອງຂອງພາກລັດ ຕ້ອງໄດ້ສະເໜີຂໍຄຳເຫັນຈາກ ກົມວິຊາການ ຂອງກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນທີ່ໂຄງການຕັ້ງຢູ່ ເພື່ອກວດກາຄວາມສອດຄ່ອງກັບແຜນບູລິມະສິດຂອງພາກສ່ວນດັ່ງກ່າວ ແລະ ບໍ່ເປັນໂຄງການ ຊໍ້າຊ້ອນແລ້ວສົ່ງໃຫ້ ກປສ (ຕົວຢ່າງ: ໂຄງການຂອງອົງການຈັດຕັ້ງສັງຄົມ ທີ່ກ່ຽວຂ້ອງກັບການອະນຸລັກປ່າໄມ້ບ້ານ ຕ້ອງສະເໜີຂໍຄຳເຫັນກັບກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ແລະ ໄດ້ຮັບການເຫັນດີຈາກ ອົງການປົກຄອງຂັ້ນເມືອງ/ຂັ້ນແຂວງ);

6.3. ຮ່າງບົດສະເໜີໂຄງການສະບັບສົມບູນ ລວມທັງເອກະສານກ່ຽວຂ້ອງຕ່າງໆແມ່ນສາມາດດາວໂຫຼດໄດ້ທີ່ ເວັບໄຊຂອງ ກປສ: www.laoepf.org.la. ສຳລັບແບບຟອມບົດສະເໜີໂຄງການແມ່ນສາມາດດາວໂລດຕາມລິ້ງຄັດຕິດມານີ້ ຟອມສະເໜີໂຄງການ - Environment Protection Fund (laoepf.org.la). ເອກະສານບົດນຳສະເໜີໂຄງການແມ່ນເຮັດເປັນພາສາລາວ;

6.4. ການເປີດຮັບບົດສະເໜີໂຄງການແມ່ນເລີ່ມແຕ່ ເດືອນມັງກອນ ຫາ ເດືອນກັນຍາ ປີ 2023;

6.5. ພາກສ່ວນທີ່ປະກອບເອກະສານຄົບຊຸດແລ້ວຕ້ອງຍື່ນຫາ ກະຊວງທີ່ກ່ຽວຂ້ອງ (ກົມວິຊາການ ແລະ ກົມແຜນ ການ) ແລ້ວຈຶ່ງນຳສົ່ງຫາ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ຊຶ່ງມີສຳນັກງານຕັ້ງຢູ່ບ້ານນາໄຮ່ດຽວ, ຕຶກ 100, ຊັ້ນ 2, ຕູ້ປນ: 7647, ໂທ: 021-252739, ແຟັກ: 021-251964.